ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

----------------------

ສຳນັກງານນາຍົກລັດຖະມົນຕີ

ເລກທີ 06 /ນຍ

ນະຄອນຫລວງວຽງຈັນ, ວັນທີ. 24. 01. 2005

# ດຳລັດ
## ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ
## ຂອງ ກະຊວງການຄ້າ

- ອີງຕາມກົດໝາຍວ່າດ້ວຍ ລັດຖະບານ ແຫ່ງ ສປປ ລາວ, ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003.
- ອີງຕາມການຕົກລົງ ຂອງກອງປະຊຸມລັດຖະບານ ຄັ້ງວັນທີ 29 ມິຖຸນາ 2004.
- ອີງຕາມການສະເໜີ ຂອງລັດຖະມົນຕີວ່າການ ກະຊວງການຄ້າ ສະບັບເລກທີ 0964/ກຄມ, ລົງວັນທີ 14 ຕຸລາ 2004.

**ນາຍົກລັດຖະມົນຕີ ອອກດຳລັດ**

## ໝວດທີ I
## ທີ່ຕັ້ງ ແລະ ພາລະບົດບາດ

**ມາດຕາ 1: ທີ່ຕັ້ງ ແລະ ພາລະບົດບາດ**

ກະຊວງການຄ້າ ຂຽນເປັນຕົວອັກສອນຫຍໍ້ວ່າ: " ກຄ " ແມ່ນອົງການຈັດຕັ້ງຄຸ້ມຄອງມະຫາພາກໃນກົງຈັກຂອງລັດຖະບານ, ມີພາລະບົດບາດເປັນເສນາທິການໃຫ້ແກ່ສູນກາງພັກ ແລະ ລັດຖະບານໃນການຄົ້ນຄ້ວາ, ສັງລວມ, ສ້າງແຜນການ, ຈັດຕັ້ງປະຕິບັດ ແລະ ຄຸ້ມຄອງວຽກງານການຄ້າພາຍໃນ, ການຄ້າຕ່າງປະເທດ, ວຽກງານຂໍ້ມູນ-ສະຖິຕິການຄ້າ, ວຽກງານເຈົ້າໜ້າທີ່ອາວຸໂສເສດຖະກິດອາຊຽນ, ວຽກງານສົ່ງເສີມການຄ້າ, ການຈັດຕັ້ງງານວາງສະແດງສິນຄ້າຢູ່ພາຍໃນ ແລະ ຕ່າງປະເທດ ແລະ ວຽກງານກະກຽມ ແລະ ເຂົ້າເປັນສະມາຊິກອົງການການຄ້າໂລກ.

## ໝວດທີ II
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 2: ໜ້າທີ່ຂອງກະຊວງການຄ້າ**

ກະຊວງການຄ້າມີໜ້າທີ່ຕົ້ນຕໍ ດັ່ງນີ້:

2.1- ຄົ້ນຄວ້າຫັນແນວທາງນະໂຍບາຍຂອງພັກ ແລະ ລັດຖະບານໃຫ້ກາຍເປັນແຜນຍຸດທະສາດກ່ຽວກັບ ການພັດທະນາຂະແໜງການຄ້າ ເພື່ອນຳສະເໜີຕໍ່ຄະນະລັດຖະບານພິຈາລະນາ ແລະ ພາຍຫລັງລັດຖະບານ ຫລື ຂັ້ນເທິງທີ່ມີສິດອຳນາດພິຈາລະນາຮັບຮອງເອົາແລ້ວ ຄົ້ນຄ້ວາຜັນຂະຫຍາຍເປັນແຜນການ, ແຜນງານ ແລະ ໂຄງການລະອຽດ ພ້ອມທັງຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ;

2.2- ຄົ້ນຄ້ວາຮ່າງນະໂຍບາຍ, ຮ່າງກົດໝາຍ, ຮ່າງລັດຖະບັນຍັດ, ຮ່າງລັດຖະດຳລັດ, ຮ່າງດຳລັດກ່ຽວກັບ ການຄຸ້ມຄອງວຽກງານການຄ້າ ເພື່ອສະເໜີຕໍ່ລັດຖະບານ ແລະ ພາຍຫລັງລັດຖະບານ ຫລື ຂັ້ນເທິງທີ່ມີສິດອຳນາດພິຈາລະນາຮັບຮອງ ແລະ ປະກາດໃຊ້ຢ່າງເປັນທາງການແລ້ວ ຄົ້ນຄ້ວາອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ; ໂຄສະນາ, ເຜີຍແຜ່ ແນະນຳ, ຊຸກຍູ້ ແລະ ຕິດຕາມ-ກວດກາບັນດາຂະແໜງການ, ອົງການປົກຄອງທ້ອງຖິ່ນ, ພົນລະເມືອງລາວ, ຊາວຕ່າງດ້າວ ແລະ ຊາວຕ່າງປະເທດທີ່ອາໄສຢູ່ ສປປລາວ ໃຫ້ປະຕິບັດຕາມຢ່າງເຂັ້ມງວດ, ແນະນຳອົງການປົກຄອງທ້ອງຖິ່ນ ແລະ ຂັ້ນລຸ່ມຂອງຕົນອອກລະບຽບການ ຫລື ນິຕິກຳຕ່າງໆ ໂດຍສອດຄ່ອງກັບກົດໝາຍຂອງລັດ ແລະ ລະບຽບການ ຂອງກະຊວງການຄ້າວາງອອກ;

2.3- ພົວພັນ, ຮ່ວມມື ແລະ ເຈລະຈາດ້ານການຄ້າກັບຕ່າງປະເທດ, ອົງການຈັດຕັ້ງເສດຖະກິດ ແລະ ສາກົນ ເປັນຕົ້ນໃນການເຊື່ອມໂຍງເສດຖະກິດໃນພາກພື້ນ ແລະ ໃນໂລກ; ຊີ້ນຳ, ແນະນຳການປະຕິບັດຂໍ້ຜູກພັນສັນຍາ ຫລື ເນື້ອໃນທີ່ໄດ້ຕົກລົງນຳກັນ ກ່ຽວກັບການພົວພັນຮ່ວມມືໃນວຽກງານການຄ້າ ແລະ ພັນທະຜູກພັນທີ່ມີຕໍ່ສາກົນ; ຢັ້ງຢືນແຫຼ່ງກຳເນີດສິນຄ້າຂອງລາວ ແລະ ຄຸ້ມຄອງການນຳເຂົ້າ-ສົ່ງອອກສິນຄ້າ ລະຫວ່າງ ລາວກັບຕ່າງປະເທດ; ຄົ້ນຄວ້າກຳນົດມາດຕະການ ແລະ ວິທີການທີ່ຈຳເປັນເພື່ອຄຸ້ມຄອງ ແລະ ພັດທະນາການເຄື່ອນໄຫວທຸລະກິດບໍລິການ ກ່ຽວກັບ ການຄ້າຊາຍແດນ, ການຄ້າສົ່ງອອກຕໍ່, ການຈັດຕັ້ງຕະຫລາດຊາຍແດນ ລະຫວ່າງ ລາວກັບປະເທດເພື່ອນບ້ານໃກ້ຄຽງ ແລະ ປະເທດອື່ນໆ ບົນພື້ນຖານລະບຽບກົດໝາຍ ແລະ ນະໂຍບາຍສົ່ງເສີມການຄ້າທີ່ພັກ-ລັດວາງອອກ;

2.4- ເປັນໃຈກາງຈັດຕັ້ງປະສານງານ ກັບທຸກພາກສ່ວນກ່ຽວຂ້ອງຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ ໃນການກະກຽມເຂົ້າເປັນສະມາຊິກຂອງອົງການການຄ້າໂລກ ລວມທັງການສະເໜີທິດທາງແຜນການ, ແຜນງົບປະມານ ແລະ ໂຄງການລະອຽດ; ກຳນົດບາດກ້າວດຳເນີນ ແລະ ແນະນຳການເຄື່ອນໄຫວຈັດຕັ້ງປະຕິບັດ; ໂຄສະນາເຜີຍແຜ່ຢ່າງກ້ວາງຂວາງໃຫ້ປະຊາຊົນຮັບຊາບ ແລະ ຈັດຕັ້ງການຝຶກອົບຮົມຍົກລະດັບໃຫ້

ພະນັກງານທີ່ກ່ຽວຂ້ອງ ພ້ອມທັງຍາດແຍ່ງທຶນຊ່ວຍເຫລືອຈາກຕ່າງປະເທດ ເພື່ອມາຮັບໃຊ້ວຽກງານກະກຽມເຂົ້າເປັນສະມາຊິກອົງການການຄ້າໂລກ ;

2.5- ຮັບຜິດຊອບວຽກງານເຈົ້າໜ້າທີ່ອາວຸໂສເສດຖະກິດອາຊຽນຕາມບົດບາດໜ້າທີ່ ຂອງອົງການສະຖາບັນຮ່ວມມືເສດຖະກິດຂອງອາຊຽນກຳນົດໄວ້;

2.6- ຄຸ້ມຄອງສິນຄ້າ, ດັດສົມລາຄາ, ປະກອບສ່ວນຮັກສາສະເຖຽລະພາບດ້ານເສດຖະກິດ ແລະ ການຄວບຄຸມໄພເງິນເຟີ້, ຄຸ້ມຄອງຕາໜ່າງການຈໍລະຈອນສິນຄ້າພາຍໃນປະເທດ ແລະ ຄຸ້ມຄອງວຽກງານທະບຽນ ເພື່ອໃຫ້ເປັນລະບົບເອກະພາບ ໃນຂອບເຂດທົ່ວປະເທດ ;

2.7- ເປັນເຈົ້າໜ້າທີ່ຄຸ້ມຄອງ-ກວດກາຕະຫລາດ, ຕິດຕາມ-ກວດກາຄຸນນະພາບສິນຄ້າ, ມາດຕະຖານ, ມາດຕາວັດແທກ ແລະ ມາດຕາຊັ່ງສິນຄ້າໃນທ້ອງຕະຫລາດຕາມນະໂຍບາຍ ແລະ ລະບຽບການຂອງອົງການທີ່ກ່ຽວຂ້ອງກຳນົດໄວ້ ແນໃສ່ປົກປ້ອງສິດຜົນປະໂຫຍດຂອງຜູ້ຜະລິດ ແລະ ຜູ້ຊົມໃຊ້ ;

2.8- ຊຸກຍູ້ ແລະ ສົ່ງເສີມຜູ້ປະກອບການທຸລະກິດ ແລະ ບັນດາຫົວໜ່ວຍທຸລະກິດໃຫ້ມີການພັດທະນາ, ຜະລິດສິນຄ້າແກ້ໄຂຊີວິດການເປັນຢູ່ ຈຳໜ່າຍຢູ່ຕະຫລາດພາຍໃນ ແລະ ສົ່ງອອກສິນຄ້າຂອງລາວໄປສູ່ຕະຫລາດໂລກ ; ຈັດຕັ້ງການວາງສະແດງສິນຄ້າ, ການໂຄສະນາສິນຄ້າຂອງລາວຢູ່ພາຍໃນ ແລະ ຕ່າງປະເທດ; ຝຶກອົບຮົມ, ໃຫ້ຄຳປຶກສາຫາລື ແລະ ໃຫ້ຄວາມສະດວກແກ່ຫົວໜ່ວຍທຸລະກິດ ເພື່ອຍົກສູງຄວາມຮູ້ຄວາມສາ ມາດ ແລະ ສ້າງຄວາມເຂັ້ມແຂງໃນການດຳເນີນທຸລະກິດການຄ້າ, ການບໍລິການ ເພື່ອໃຫ້ສາມາດແກ້ງແຍ່ງແຂ່ງຂັນໃນຕະຫລາດພາຍໃນ ແລະ ຕະຫລາດຕ່າງປະເທດໄດ້ ;

2.9- ເປັນໃຈກາງປະສານງານກັບທຸກພາກສ່ວນທີ່ກ່ຽວຂ້ອງໃນການຄົ້ນຄ້ວາ-ສັງລວມ, ການຄຸ້ມຄອງ-ບໍລິຫານ, ການຕິດຕາມ-ກວດກາ ແລະ ການລາຍງານກ່ຽວກັບຂະບວນການຂອງໂຄງການຜະລິດສິນຄ້າໃນທົ່ວປະເທດ ຕາມການມອບໝາຍຂອງລັດຖະບານ ;

2.10- ເກັບກຳສະຖິຕິການຄ້າ, ວິໄຈ, ສະຫລຸບສັງລວມຂໍ້ມູນຂ່າວສານ ກ່ຽວກັບ ສະພາບລາຄາສິນຄ້າ ແລະ ອື່ນໆ ທີ່ກ່ຽວຂ້ອງກັບວຽກງານການຄ້າຢູ່ພາຍໃນ ແລະ ຕ່າງປະເທດ ເພື່ອລາຍງານໃຫ້ແກ່ລັດຖະບານ, ສະໜອງໃຫ້ແກ່ການຈັດຕັ້ງທຸລະກິດ ແລະ ບຸກຄົນຜູ້ທີ່ມີຄວາມສົນໃຈ;

2.11- ຈັດຕັ້ງການຝຶກອົບຮົມ ແລະ ການແນະນຳດ້ານວິຊາສະເພາະ ຂອງຂະແໜງການຄ້າ ໃຫ້ແກ່ບັນດາການຈັດຕັ້ງໃນໂຄງປະກອບກົງຈັກ ຂອງກະຊວງການຄ້າ ຢູ່ຂັ້ນສູນກາງ, ທ້ອງຖິ່ນ ແລະ ຜູ້ຕາງໜ້າການຄ້າຢູ່ຕ່າງປະເທດ ;

2.12- ຄົ້ນຄົ້ນວິທະຍາສາດ, ວິຊາການກ່ຽວກັບ ກົດໝາຍ, ນະໂຍບາຍ, ແຜນຍຸດທະສາດການພັດທະນາຂະແໜງການຄ້າໃນແຕ່ລະໄລຍະຊ່ວຍລັດຖະບານ; ກຳນົດຫລັກສູດການຮຽນການສອນ ເພື່ອຝຶກອົບຮົມ ບຳລຸງຍົກລະດັບ ດ້ານວຽກງານການຄ້າໃຫ້ແກ່ພະນັກງານ-ລັດຖະກອນ ແລະ ໃຫ້ແກ່ຜູ້ປະກອບການທຸລະກິດການຄ້າ ແລະ ເປົ້າໝາຍອື່ນໆ;

2.13- ສ້າງແຜນກໍ່ສ້າງ, ບຳລຸງຍົກລະດັບໃຫ້ແກ່ພະນັກງານ-ລັດຖະກອນ ໃນຂະແໜງການຄ້າ ໃຫ້ມີຄວາມຮູ້ດ້ານທິດສະດີການເມືອງ, ມີຄຸນສົມບັດສິນທຳປະຕິວັດ, ມີຄວາມຮູ້ຄວາມສາມາດທາງດ້ານວິຊາການໃນລະດັບອັນແນ່ນອນ; ຄຸ້ມຄອງ, ນຳໃຊ້, ບັນຈຸ ແຕ່ງຕັ້ງ, ປົດຕຳແໜ່ງ, ປະຕິບັດນະໂຍບາຍ ແລະ ປະຕິບັດວິໄນຕໍ່ພະນັກງານ-ລັດຖະກອນ ໃນທົ່ວຂະແໜງການຄ້າ ຕາມຂອບເຂດສິດ ແລະ ຕາມການແບ່ງຂັ້ນຄຸ້ມຄອງ; ຄົ້ນຄວ້າ ປັບປຸງ ກົງຈັກການຈັດຕັ້ງ ແລະ ກຳນົດຕຳແໜ່ງງານໃຫ້ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການ ຂອງວຽກງານໃນແຕ່ລະໄລຍະ;

2.14- ຈັດຕັ້ງ, ຊີ້ນຳ, ຕິດຕາມການເຄື່ອນໄຫວວຽກງານກວດກາການເຄົາລົບ ແລະການປະຕິບັດລະບຽບກົດໝາຍຂອງລັດ ແລະ ນິຕິກຳຕ່າງໆຂອງກະຊວງການຄ້າທີ່ວາງອອກ; ສະເໜີລັດຖະບານ ພິຈາລະນາສັ່ງໃຫ້ຢຸດຕິ ຫລື ໃຫ້ປັບປຸງຄືນບັນດານິຕິກຳ ທີ່ບໍ່ສອດຄ່ອງ ຫລື ຂັດກັບລະບຽບກົດໝາຍ;

2.15- ຄຸ້ມຄອງ, ນຳໃຊ້ເງິນງົບປະມານ, ວັດຖຸອຸປະກອນ ແລະ ພາຫະນະຕ່າງໆ ທີ່ລັດຖະບານມອບໃຫ້ ຢ່າງມີປະສິດທິຜົນ, ມີການປະຢັດ ແລະ ຄຸ້ມຄ່າ ;

2.16- ສະຫລຸບສັງລວມສະພາບການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງກະຊວງການຄ້າ ເພື່ອລາຍງານນາຍົກລັດຖະມົນຕີ, ລັດຖະບານ ແລະ ອົງການຈັດຕັ້ງຂັ້ນເທິງທີ່ມີສິດອຳນາດ ຢ່າງເປັນປົກກະຕິ ;

2.17- ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງລັດຖະບານ ແລະ ຕາມທີ່ໄດ້ກຳນົດໄວ້ຢູ່ໃນລະບຽບກົດໝາຍ.

**ມາດຕາ 3: ສິດຂອງກະຊວງການຄ້າ**

ກະຊວງການຄ້າ ມີຂອບເຂດສິດດັ່ງນີ້:

3.1- ສະເໜີປັບປຸງ ຫລື ສ້າງຮ່າງກົດໝາຍ, ຮ່າງລັດຖະບັນຍັດ, ຮ່າງລັດຖະດຳລັດ ແລະ ຮ່າງດຳລັດກ່ຽວກັບວຽກງານຂອງຂະແໜງການຄ້າ ເພື່ອສະເໜີຕໍ່ລັດຖະບານ;

3.2- ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ເພື່ອຜັນຂະຫຍາຍ, ຈັດຕັ້ງປະຕິບັດກົດໝາຍ ຫລື ນິຕິກຳຕ່າງໆ ທີ່ລັດຖະບານຮັບຮອງແລ້ວ ກ່ຽວກັບ ວຽກງານຂອງຂະແໜງການຄ້າ;

3.3- ມີສິດສະເໜີດັດແປງ, ງົດການປະຕິບັດ, ລົບລ້າງ ຫລື ຍົກເລີກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການຕ່າງໆ ຂອງຂະແໜງການ ຫລື ທ້ອງຖິ່ນ ເມື່ອເຫັນວ່າ ນິຕິກຳດັ່ງກ່າວ ຂັດກັບກົດໝາຍ ແລະ ລະບຽບການຕ່າງໆ ຂອງຂະແໜງການຄ້າ.

3.4- ເຊັນສັນຍາ, ອະນຸສັນຍາ ແລະ ບົດບັນທຶກການພົວພັນຮ່ວມມືດ້ານການຄ້າ ກັບຕ່າງປະເທດ, ອົງການຈັດຕັ້ງສາກົນ ຫລື ນັກທຸລະກິດຕ່າງປະເທດ ຕາມການອະນຸມັດຂອງລັດຖະບານ;

3.5- ສະເໜີມາດຕະການປ້ອງກັນ ແລະ ຕອບໂຕ້ທາງດ້ານການຄ້າ ເພື່ອຮັບປະກັນຜົນປະໂຫຍດ ຂອງປະເທດ;

3.6- ກວດກາ, ກວດການບັນດາຫົວໜ່ວຍທຸລະກິດຂອງທຸກຂະແໜງການ ໃນການປະຕິບັດກົດໝາຍ, ນິຕິກຳຕ່າງໆ ທີ່ກ່ຽວກັບການດຳເນີນທຸລະກິດ;

3.7- ອອກ ຫລື ຖອນໃບອະນຸຍາດ ຫລື ລຶບລ້າງທະບຽນວິສາຫະກິດຂອງບັນດາຫົວໜ່ວຍທຸລະກິດຕ່າງໆ ຕາມລະບຽບການໄດ້ກຳນົດໄວ້;

3.8- ວາງລະບຽບການ ແລະ ມາດຕະການທີ່ເໝາະສົມໃນການເປັນເຈົ້າໜ້າທີ່ຄຸ້ມຄອງ ແລະ ກວດກາຕະຫລາດ;

3.9- ສະເໜີປັບປຸງກົງຈັກການຈັດຕັ້ງ ເພື່ອໃຫ້ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການ ຂອງວຽກງານຂະແໜງການຄ້າໃນແຕ່ລະໄລຍະ;

3.10- ກໍ່ສ້າງ, ບຳລຸງ, ແຕ່ງຕັ້ງ, ປົດຕຳແໜ່ງ, ຍ້ອງຍໍ ຫລື ລົງວິໄນ, ສັບຊ້ອນ, ຍົກຍ້າຍ, ຈັດວາງ, ຕີລາຄາ ແລະປະເມີນຜົນ ພະນັກງານ-ລັດຖະກອນ ທີ່ຢູ່ໃນການຄຸ້ມຄອງຂອງຕົນ ຕາມລະບຽບການກຳນົດໄວ້;

3.11- ວາງມາດຕະການອັນຈຳເປັນ ເພື່ອຮັບປະກັນການປະຕິບັດໜ້າທີ່ວຽກງານຂອງຂະແໜງການຄ້າ;

3.12- ປະຕິບັດ ແລະ ນຳໃຊ້ສິດອື່ນໆ ຕາມການມອບໝາຍຂອງລັດຖະບານ ຫລື ຕາມການກຳນົດໃນລັດຖະທຳມະນູນ ແລະ ລະບຽບກົດໝາຍ;

## ໝວດທີ III
## ໂຄງປະກອບການຈັດຕັ້ງ

### ມາດຕາ 4: ໂຄງປະກອບບຸກຄະລາກອນ

1- ກະຊວງການຄ້າ ປະກອບມີລັດຖະມົນຕີວ່າການກະຊວງ ເປັນຫົວໜ້າກະຊວງ. ລັດຖະມົນຕີວ່າການ ເປັນສະມາຊິກຂອງລັດຖະບານ, ມີໜ້າທີ່ຮັບຜິດຊອບຕໍ່ລັດຖະບານ ກ່ຽວກັບ ຜົນສຳເລັດ ຫລື ຂໍ້ຂາດຕົກບົກຜ່ອງໃນການຄຸ້ມຄອງຂະແໜງການຄ້າໃນຂອບເຂດທົ່ວປະເທດ ແລະ ການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງກະຊວງການຄ້າ ທີ່ໄດ້ກຳນົດໃນດຳລັດສະບັບນີ້.

2- ກະຊວງການຄ້າ ມີລັດຖະມົນຕີຊ່ວຍວ່າການ ຈຳນວນໜຶ່ງ ເປັນຜູ້ຊ່ວຍວຽກລັດຖະມົນຕີວ່າການ ໃນການຄຸ້ມຄອງ ອຳນວຍຄວບຄຸມວຽກງານຂອງກະຊວງ ແລະ ຮັບຜິດຊອບຂົງເຂດວຽກງານໃດໜຶ່ງ ຕາມການມອບໝາຍຂອງລັດຖະມົນຕີວ່າການ.

3- ກະຊວງການຄ້າ ຍັງປະກອບມີ ຫົວໜ້າ, ຮອງຫົວໜ້າຫ້ອງການ; ຫົວໜ້າ, ຮອງຫົວໜ້າກົມ; ຫົວໜ້າ, ຮອງຫົວໜ້າສະຖາບັນ; ຫົວໜ້າ, ຮອງຫົວໜ້າພະແນກ ທີ່ໄດ້ຮັບການ

ແຕ່ງຕັ້ງ ຫລື ປົດຕໍາແໜ່ງ ຕາມກົດໝາຍວ່າດ້ວຍ ລັດຖະບານ ຫລື ລະບຽບລັດຖະກອນ ກໍານົດໄວ້.

4- ການນໍາ ຂອງສາຍຕັ້ງຂອງຂະແໜງການຄ້າປະຈໍາຢູ່ທ້ອງຖິ່ນ ປະກອບມີຫົວໜ້າ, ຮອງຫົວໜ້າພະແນກການຄ້າແຂວງ; ຫົວໜ້າ, ຮອງຫົວໜ້າຫ້ອງການການຄ້າເມືອງ ທີ່ ໄດ້ຮັບການແຕ່ງຕັ້ງ ຫລື ປົດຕໍາແໜ່ງຕາມລະບຽບການທີ່ໄດ້ກໍານົດໄວ້.

5- ກະຊວງການຄ້າ ຍັງປະກອບມີທີ່ປຶກສາ ແລະ ບັນດາເລຂາຮັບຜິດຊອບວຽກງານເສດຖະກິດການຄ້າຈໍານວນໜຶ່ງ ໄປປະຈໍາຢູ່ຕ່າງປະເທດ ຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານ.

6- ນອກຈາກນັ້ນ, ກະຊວງການຄ້າຍັງປະກອບມີພະນັກງານວິຊາການ ແລະ ພະນັກງານບໍລິຫານ ຢູ່ຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ໂດຍອີງໃສ່ຕໍາແໜ່ງງານທີ່ກໍານົດໄວ້.

**ມາດຕາ 5: ໂຄງປະກອບກົງຈັກການຈັດຕັ້ງ ຂອງກະຊວງການຄ້າ**

ກ)- ຂັ້ນສູນກາງປະກອບມີ ດັ່ງນີ້:

1. ຫ້ອງການກະຊວງ;
2. ກົມຈັດຕັ້ງ ແລະ ພະນັກງານ;
3. ກົມກວດກາ;
4. ກົມການຄ້າຕ່າງປະເທດ;
5. ກົມຄຸ້ມຄອງການນໍາເຂົ້າ ແລະ ສົ່ງອອກ;
6. ກົມການຄ້າພາຍໃນ;
7. ສູນສົ່ງເສີມການຄ້າລາວ;
8. ສະຖາບັນຄົ້ນຄ້ວາເສດຖະກິດການຄ້າ.

ຂ)- ສາຍຕັ້ງປະຈໍາຢູ່ທ້ອງຖິ່ນປະກອບມີ:

1. ພະແນກການຄ້າປະຈໍາແຂວງ;
2. ຫ້ອງການການຄ້າປະຈໍາເມືອງ.

ຄ)- ຫ້ອງການທີ່ປຶກສາເສດຖະກິດການຄ້າຂອງລາວປະຈໍາຢູ່ຕ່າງປະເທດ.

- ຫ້ອງການກະຊວງ, ບັນດາກົມ, ສະຖາບັນ ແມ່ນອະນຸຍາດໃຫ້ສ້າງຕັ້ງກົງຈັກຂັ້ນພະແນກ ຕາມຄວາມເໝາະສົມ ໂດຍອີງໃສ່ບໍລິມາດຂອງວຽກງານ ແລະ ຕໍາແໜ່ງງານທີ່ໄດ້ກໍານົດ.
- ພະແນກການຄ້າປະຈໍາແຂວງ ແມ່ນອະນຸຍາດໃຫ້ສ້າງຕັ້ງຫ້ອງວິຊາການຕ່າງໆ ໂດຍອີງໃສ່ຄວາມຕ້ອງການຕົວຈິງຂອງວຽກງານ.
- ຫ້ອງການການຄ້າເມືອງແມ່ນອະນຸຍາດໃຫ້ມີໜ່ວຍງານຕ່າງໆຕາມຄວາມເໝາະສົມ.

ມອບໃຫ້ລັດຖະມົນຕີວ່າການກະຊວງການຄ້າ ອອກຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ແລະ ກຳນົດຕຳແໜ່ງງານຂອງບັນດາໂຄງປະກອບກົງຈັກແຕ່ລະຂັ້ນ ຂອງກະຊວງການຄ້າ ບົນພື້ນຖານລະບຽບຫຼັກການທີ່ໄດ້ກຳນົດ.

## ໝວດທີ IV
## ລະບອບແບບແຜນວິທີເຮັດວຽກ

**ມາດຕາ 6: ຫຼັກການຄຸ້ມຄອງຕາມຂະແໜງການ.**

ກະຊວງການຄ້າ ຄຸ້ມຄອງຂະແໜງການຄ້າຕາມສາຍຕັ້ງຂອງຕົນ ແຕ່ຂັ້ນສູນກາງລົງຮອດທ້ອງຖິ່ນໃນຂອບເຂດທົ່ວປະເທດ ບົນພື້ນຖານກົດໝາຍ ແລະ ລະບຽບກົດໝາຍທີ່ກຳນົດໄວ້.

**ມາດຕາ 7: ຫຼັກການເຮັດວຽກ**

ກະຊວງການຄ້າ ເຄື່ອນໄຫວວຽກງານຕາມຫຼັກການລວມ ຄື :

- ປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ ໂດຍມີການສົມທົບ ລະຫວ່າງ ຄວາມຮັບຜິດຊອບຂອງໝູ່ຄະນະ ກັບການຍົກສູງຄວາມຮັບຜິດຊອບຂອງບຸກຄົນ, ເສີມຂະຫຍາຍຫົວຄິດປະດິດສ້າງຂອງພະນັກງານ, ລັດຖະກອນທຸກລະດັບ ໃຫ້ມີປະສິດທິພາບ;
- ເຄື່ອນໄຫວວຽກງານຢ່າງມີແຜນການ, ແຜນງານ ແລະ ໂຄງການລະອຽດ, ມີຈຸດສຸມ ແລະ ມີເປົ້າໝາຍໃນແຕ່ລະໄລຍະ;
- ທັນລົງຮາກຖານຢ່າງເປັນປະຈຳ, ປະສານສົມທົບຢ່າງແໜັນແຟ້ນ ກັບບັນດາຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ແນໃສ່ໝູນໃຊ້ກຳລັງແຮງສັງລວມຂອງທຸກພາກສ່ວນ ເຂົ້າໃນການເຮັດຫລ້ອນໜ້າທີ່ ທີ່ໄດ້ຮັບມອບໝາຍ;
- ທຸກການເຄື່ອນໄຫວ, ຂັ້ນຕອນຂອງວຽກງານຂອງຕົນ ຕ້ອງມີການສຳຫຼວດ, ກວດກາ, ສະຫຼຸບ, ຖອດຖອນບົດຮຽນ, ຕີລາຄາ, ປະເມີນຜົນ ແລະ ສາເຫດຂອງແຕ່ລະດ້ານຢ່າງຖືກຕ້ອງ ແທດເໝາະກັບສະພາບຄວາມເປັນຈິງ ເພື່ອລາຍງານ, ຂໍຄຳເຫັນ ຫຼື ທິດຊີ້ນຳຈາກລັດຖະບານ.

## ໝວດທີ V
## ບົດບັນຍັດສຸດທ້າຍ

**ມາດຕາ 8: ການປະທັບ ແລະ ງົບປະມານ**

ກະຊວງການຄ້າ, ຫ້ອງການ, ບັນດາກົມ, ສະຖາບັນ, ພະແນກການຄ້າຂັ້ນ

ແຂວງ, ຫ້ອງການການຄ້າຂັ້ນເມືອງ, ອະນຸຍາດມີກາປະທັບ ແລະ ງົບປະມານ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 09 : ການຈັດຕັ້ງປະຕິບັດ**

ມອບໃຫ້ກະຊວງການຄ້າ ເປັນຜູ້ຈັດຕັ້ງປະຕິບັດດຳລັດສະບັບນີ້; ບັນດາ ກະຊວງ, ອົງການທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນທຸກຂັ້ນ ຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະ ອຳນວຍຄວາມສະດວກໃນການຈັດຕັ້ງປະຕິບັດ ດຳລັດ ສະບັບນີ້ ຕາມພາລະບົດບາດຂອງໃຜລາວຢ່າງເຂັ້ມງວດ.

**ມາດຕາ 10: ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນ ດຳລັດສະບັບເລກທີ 78/ນຍ, ລົງວັນທີ 14/06/2002 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການຄ້າ.

**ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ.**

